## ບ່ອນຊ່ວຍເຫລືອໃຫ້ຄຳປຶກສາເຣື່ອງການກັມມະພັນສຳລັບພະຍາດ ແລະ ລັກສະນະຂອງຮີໂມໂກລບິນ

### Washington ພາກຕາເວັນຕົກ

Eastside Maternal Fetal Medicine
1135 116th Ave E, Suite 320
**Bellevue**, WA 98004
ໂທຣະສັບ: (425)-688-8111
ແຟກຊ໌: (425)-688-8110

Evergreen Hospital Medical Center
ຢາແມ່ ແລະ ເດັກ-ເດັກໃນທ້ອງ
12333 NE 130th Ln, # 230
**Kirkland**, WA 98034
ໂທຣະສັບ: (425) 899-2200
ແຟກຊ໌: (425) 889-2210

Children's Hospital and Regional Medical Center – ຄລີນິກກັມມະພັນ
4800 Sand Point Way NE/
PO Box 5371, M2-9
**Seattle**, WA 98105-0371
ໂທຣະສັບ: (206) 987-2056
ແຟກຊ໌: (206) 987-2495

Columbia Health Center
4400 - 37th South
**Seattle**, WA 98118
ໂທຣະສັບ: (206) 296-4650
ແຟກຊ໌: (206) 205-6075

Group Health Cooperative
ພແນກດ້ານກັມມະພັນ
201 16th Ave E Mailstop CMB-5
**Seattle**, WA 98112
ໂທຣະສັບ: (206) 326-3111
ແຟກຊ໌: (206) 326-2010
*(ສຳລັບສະມາຊິກເທົ່ານັ້ນ)*

Odessa Brown Sickle Cell Clinic
2101 E. Yesler Way
**Seattle**, WA 98122
ສັ່ງຄວາມໃວ້: (206) 987-7290
ໝາຍນັດພົບ: (206) 987-7232
ແຟກຊ໌: (206) 329-9764

Swedish Medical Center
ຢາກ່ອນກຳເນີດ
1229 Madison
Nordstrom Tower, Ste. 750
**Seattle**, WA 98104
ໂທຣະສັບ: (206)-386-2101

University of Washington Medical Center
ຄລີນິກກັມມະພັນ
Box 357720
1959 NE Pacific Street
**Seattle**, WA 98195-7720
ໂທຣະສັບ: (206) 598-4030
ແຟກຊ໌: (206) 598-3269

University of Washington Medical Center
ກັມມະພັນກ່ອນກຳເນີດແລະການຝຶກແອບກ່ອນກຳເນີດ
Box 356159
1959 NE Pacific Street
**Seattle**, WA 98195
ໂທຣະສັບ: (206) 598-8130
ແຟກຊ໌: (206) 598-2359

Madigan Army Medical Center
ການປິ່ນປົວເດັກດ້ານການຈະເຣີນເຕີບໂຕ
Bldg 9040 Fitzsimmons Drive
**Tacoma**, WA 98432
ໂທຣະສັບເຣັດໝາຍນັດພົບ: (253) 968-3043
ໂທຣະສັບຜູ້ປຶກສາດ້ານກັມມະພັນ: (253) 968-1389
ແຟກຊ໌: (253) 968-0384
*(ການບໍຣິການຈຳກັດໃຫ້ແກ່ເຈົ້າໜ້າທີ່ທະຫານແລະຄົນຫວັງເພິ່ງຂອງເຂົາເຈົ້າ)*

Mary Bridge Sickle Cell Clinic
P.O. Box 5299
**Tacoma**, WA 98415-0299
ໂທຣະສັບ: (253) 403-3476
ແຟກຊ໌: (253) 403-8674

MultiCare Regional Maternal-
ຢາກ່ຽວກັບເດັກໃນທ້ອງ
314 Martin Luther King Jr. Way Suite # 402
**Tacoma**, WA 98405
ໂທຣະສັບ: (253) 403-9205
ແຟກຊ໌: (253) 403-9201

### Washington ພາກຕາເວັນອອກ

Inland NW Genetics Clinic in the Tri-Cities
7221 W. Deschutes, Suite D
**Kennewick**, WA 99336
ໂທຣະສັບ: (509)-535-2278
ແຟກຊ໌: (509)-535-7502

Inland NW Genetics Clinic in Moses Lake
1550 South Pioneer Way
**Moses Lake**, WA 90937
ໂທຣະສັບ: (509) 535-2278
ແຟກຊ໌: (509) 535-7502

Kadlec Medical Center
712 Swift Blvd, Suite 1
**Richland**, WA 99352
ໂທຣະສັບ: (509) 942-2821
ແຟກຊ໌: (509) 943-1497

Inland Northwest Genetics Clinic
2607 Southeast Blvd #A100
**Spokane**, WA 99223
ໂທຣະສັບ: (509) 535-2278
ແຟກຊ໌: (509) 535-7502

Blue Mountain Genetics Clinic
320 Willow Street
**Walla Walla**, WA 99362
ໂທຣະສັບ: (509) 525-1302
ແຟກຊ໌: (509) 522-9448

Central Washington Hospital-
Genetics Program
1201 South Miller
**Wenatchee**, WA 98807-1887
ໂທຣະສັບ: (509) 667-3350
ແຟກຊ໌: (509) 665-6259

ໂຄງການກ່ຽວກັບກັມມະພັນຂອງຣັດວໍຊິງຕັນພາກກາງ
Yakima Valley Memorial Hospital
2811 Tieton Drive
**Yakima**, WA 98902
ໂທຣະສັບ: (509) 575-8160
ແຟກຊ໌: (509) 577-5088

### Oregon

Center for Genetics & Maternal –
ຢາກ່ຽວກັບເດັກໃນທ້ອງ
1200 Hilyard, Ste 510
**Eugene**, OR 97401
ໂທຣະສັບ: (541) 349-7600

Kaiser Permanente
ກົມກ່ຽວກັບກັມມະພັນ
3325 N. Interstate Ave.
**Portland**, OR 97227
ໂທຣະສັບ: (503) 331-6593
ເລກໂທຟຣີ: 1-800-813-2000 ext 16-6593
*(ສຳລັບສະມາຊິກເທົ່ານັ້ນ)*

Legacy Emanuel Hospital & Health Center
ສູນກາງສຳລັບຢາແມ່ແລະເດັກ-ເດັກໃນທ້ອງ
300 N. Graham Street, Ste 100
**Portland**, OR 97227
ໂທຣະສັບ: (503) 413-1122
ເລກໂທຟຣ: 1-800-452-7032 ext 31122

Northwest Perinatal Center
9701 SW Barnes Road, Ste 299
**Portland**, OR 97225
ໂທຣະສັບ: (503) 297-3660

Oregon Health Sciences University
Prenatal Diagnosis and Counseling
3181 SW Sam Jackson Park Road
**Portland**, OR 97239
ໂທຣະສັບ: (503) 418-4200

ຖືກດັດແປງ 06/07

Washington State Department of
Health
DOH Pub 304-005 LA
Revised July 2007

# ສິ່ງຊີ້ບອກ ເຮໂມໂກລບິນ E

ຣາຍລະອຽດສຳລັບພໍ່ແມ່ກ່ຽວກັບ
Hemoglobin E

## ເຮໂມໂກລບິນ ແມ່ນຫຍັງ?

ເຮໂມໂກລບິນ ແມ່ນສ່ວນນຶ່ງຂອງເລືອດຊຶ່ງນຳພາ ອ໋ອກຊີເຢັນ ໄປສູ່ທຸກໆພາກສ່ວນຂອງຮ່າງກາຍ. ຊະນິດຕາມປົກກະຕິຂອງ ເຮໂມໂກລບິນ ໄດ້ຖືກເອີ້ນວ່າ Hemoglobin A. ເຊື້ອສືບພັນຊຶ່ງພວກເຮົາໄດ້ຮັບສືບທອດມາຈາກພໍ່ແມ່ຂອງພວກເຮົາຈະຊີ້ບອກວ່າເຮໂມໂກລບິນຊະນິດໃດທີ່ພວກເຮົາມີຢູ່.

## ສິ່ງຊີ້ບອກ ເຮໂມໂກລບິນ E ແມ່ນຫຍັງ?

ສິ່ງຊີ້ບອກ ເຮໂມໂກລບິນ E ໝາຍຄວາມວ່າລູກຂອງທ່ານໄດ້ສືບທອດເຊື້ອສືບພັນແນວນຶ່ງສຳລັບ ຮີໂມໂກລບິນ (A) ຕາມປົກກະຕິຈາກພໍ່ແມ່ຄົນນຶ່ງ ແລະ ເຊື້ອສືບພັນແນວນຶ່ງສຳລັບ ຮີໂມໂກລບິນ E ຈາກພໍ່ແມ່ອີກຄົນນຶ່ງ. ຊິ່ງຊີ້ບອກ **ຮີໂມໂກລບິນ E ບໍ່ແມ່ນພະຍາດ ແລະ ບໍ່ກໍ່ໃຫ້ເກີດບັນຫາສຸຂະພາບຮ້າຍແຮງແນວໃດ.**

## ຈະມີຫຍັງເກີດຂື້ນຖ້າຫາກວ່າຄົນນຶ່ງມີເຊື້ອສືບພັນ ເຮໂມໂກລບິນ E ສອງແນວ?

ເມື່ອເວລາເດັກນ້ອຍສືບທອດເຊື້ອສືບພັນ ເຮໂມໂກລບິນ E ຈາກພໍ່ແມ່ທັງສອງຄົນແທນທີ່ຈະແມ່ນ ເຮໂມໂກລບິນ A, ເດັກນ້ອຍໄດ້ປະສົມ (ເຊື້ອສືບພັນແນວດຽວກັນ) ເຮໂມໂກລບິນ E ບຸກຄົນຜູ້ທີ່ມີ ເຮໂມໂກລບິນ E ແນວດຽວກັນບໍ່ມີບັນຫາສຸຂະພາບຮ້າຍແຮງແຕ່ວ່າມັນອາດຈະກໍ່ໃຫ້ເກີດມີພະຍາດເລືອດຈາງເບົາໆ (ແຊລເລືອດແດງຈຳນວນຕ່ຳ).

## ເປັນຫຍັງລູກຂອງຂ້ອຍຈຶ່ງຖືກກວດເບິ່ງສຳລັບ ເຮໂມໂກລບິນ E?

ໂຄງການກວດກັ່ນເບິ່ງເດັກນ້ອຍເກີດໃໝ່ກວດກັ່ນເບິ່ງເດັກທາຣົກທຸກໆຄົນເກີດຢູ່ໃນຣັດວໍຊິງຕັນສຳລັບພະຍາດບາງຢ່າງລວມທັງພະຍາດ ເຮໂມໂກລບິນ. ເລືອດຈຳນວນນ້ອຍນຶ່ງໄດ້ຖືກເກັບເອົາຈາກສົ້ນນ່ອງຂອງເດັກທາຣົກຂອງທ່ານ ແລະ ສົ່ງໄປຫາຫ້ອງວິຈັຍຂອງຣັດເພື່ອການກວດເບິ່ງ. ຊະນິດຂອງ ເຮໂມໂກລບິນ ຜິດປົກກະຕິແນວອື່ນຍັງຈະຖືກພົບອີກຄືກັນ.

## ຖ້າຫາກວ່າສິ່ງຊີ້ບອກ ເຮໂມໂກລບິນ E ແລະ ເຮໂມໂກລບິນ E ປະສົມກັນບໍ່ໄດ້ກໍ່ໃຫ້ເກີດບັນຫາສຸຂະພາບແນວໃດ,ເປັນຫຍັງຂ້ອຍຈຶ່ງຕ້ອງຮູ້ຈັກວ່າລູກຂອງຂ້ອຍມີຢູ່?

ມັນສຳຄັນທີ່ຈະຮູ້ຈັກກ່ຽວກັບສະພາບ ເຮໂມໂກລບິນ E ຂອງລູກທ່ານ. ຍ້ອນວ່າລູກໃນອະນາຄົດໃນຄອບຄົວຂອງທ່ານ, ຫລື ສະມາຊິກຄອບຄົວຄົນອື່ນ, ອາດຈະຕົກຢູ່ໃນອັນຕຣາຍສຳລັບການມີພະຍາດ Hemoglobin E-beta thalassemia, ພະຍາດທີ່ຮ້າຍແຮງທີ່ຖືກອະທິບາຍຢູ່ໃນໜ້າຕໍ່ໄປ. ບຸກຄົນຜູ້ທີ່ມີສິ່ງຊີ້ບອກ ເຮໂມໂກລບິນ E ຫລື ເຮໂມໂກລບິນ E ປະສົມສາມາດສົ່ງຕໍ່ເຊື້ອສືບພັນໄປຫາລູກຂອງເຂົາເຈົ້າ.

## Hemoglobin E-beta ແມ່ນຫຍັງ?

ລູກຂອງທ່ານບໍ່ມີ ເຮໂມໂກລບິນ E-beta ທາແລສຊີເມັຽ, ແຕ່ວ່າລູກໃນອະນາຄົດ ແລະ ສະມາຊິກຄອບຄົວຄົນອື່ນອາດຈະຕົກຢູ່ໃນອັນຕຣາຍທີ່ຈະມີ. ເມື່ອເວລາບຸກຄົນມີ ເຮໂມໂກລບິນE-beta ທາແລສຊີເມັຽ, ເຂົາເຈົ້າສືບທອດເຊື້ອສືບພັນຊະນິດນຶ່ງສຳລັບ ເຮໂມໂກລບິນ E ຈາກພໍ່ແມ່ຄົນນຶ່ງ ແລະ ເຊື້ອສືບພັນແນວນຶ່ງ "ເບຕາ ທາແລສຊີເມັຽ" (ການຜລິດເຮໂມໂກລບິນຕ່ຳ) ຈາກພໍ່ແມ່ອີກຄົນນຶ່ງ. ເຊື້ອສືບພັນສອງຢ່າງອັນນີ້ລວມເຂົ້າກັນກໍ່ໃຫ້ເກີດພະຍາດຂຶ້ນຂູ່ຕໍ່ຊີວິດທີ່ບໍ່ຮູ້ຈັກວິທີການປິ່ນປົວໄດ້. ມັນມີການຮັກສາໂຣກບາງຢ່າງ, ເຊັ່ນວ່າການຟອກເລືອດ, ຊຶ່ງຈຳເປັນເພື່ອຈະຊ່ວຍເຫລືອປ້ອງກັນການສັບສົນຮ້າຍແຮງ, ແຕ່ວ່າ ເຮໂມໂກລບິນ E-ເບຕາ ທາແລສຊີເມັຽເປັນພະຍາດຮ້າຍແຮງຕລອດຊີວິດຊຶ່ງຕ້ອງມີການປິ່ນປົວພະຍາບານ.

## ຂ້ອຍຈະເຮັດແນວໃດດຽວນີ້?

ພວກເຮົາແນະນຳບອກອີກວ່າທ່ານ ແລະ ຂາຄູ່ຂອງທ່ານຕ້ອງໄດ້ຖືກກວດເບິ່ງເພື່ອຈະພິຈາຣະນາເບິ່ງສຸຂະພາບຂອງ ເຮໂມໂກລບິນຂອງທ່ານ. ອັນນີ້ຈະລວມເອົາຣາຍລະອຽດໃຫ້ທ່ານກ່ຽວກັບໂອກາດຂອງທ່ານທີ່ຈະມີລູກໃນອະນາຄົດທີ່ຈະມີແບບຟອມຮ້າຍແຮງກວ່າຂອງ ເຮໂມໂກລບິນ E-ເບຕາ ທາແລສຊີເມັຽ. ເພື່ອຈະເຮັດການກວດເບິ່ງໃຫ້ແລ້ວ,ເວົ້ານຳຜູ້ປິ່ນປົວສຸຂະພາບຂອງທ່ານ ຫລື ຜູ້ແນະນຳປຶກສາເຣື່ອງການສືບພັນຄົນນຶ່ງຊຶ່ງຖືກບົ່ງຢູ່ດ້ານຫລັງຂອງປຶ້ມຄູ່ມືຫົວນີ້. ທ່ານຍັງຈະຕ້ອງການແລກປ່ຽນຣາຍລະອຽດອັນນີ້ນຳຄອບຄົວຂອງທ່ານໝົດທຸກຄົນ. ເຂົາເຈົ້າອາດຈະສົນໃຈໃນການກວດເບິ່ງສະພາບ ເຮໂມໂກລບິນ ຂອງເຂົາເຈົ້າຄືກັນ.

## ຂ້ອຍຈະແນວໃດໄດ້ຖ້າຫາກວ່າຂ້ອຍມີຄຳຖາມເພີ້ມເຕີມ?

ຖ້າຫາກວ່າທ່ານມີຄຳຖາມເພີ້ມເຕີມ, ທ່ານສາມາດເວົ້ານຳຜູ້ໃຫ້ການປິ່ນປົວລູກຂອງທ່ານໄດ້ ຫລື ທ່ານສາມາດຕິດຕໍ່ໄປຫາໂຄງການກວດກັ່ນເບິ່ງເດັກນ້ອຍເກີດໃໝ່ໂດຍໃຊ້ຣາຍລະອຽດຂ້າງລຸ່ມນີ້.

Newborn Screening Program
1610 NE 150th Street
Shoreline, WA 98155
ໂທຣະສັບ: (206) 418-5410
ເລກໂທຟຣ: 1-866-660-9050
ອີແມລ: NBS.Prog@doh.wa.gov
ອິນເຕີແນດ: www.doh.wa.gov/nbs

